ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 05 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 21 ເມສາ 2020

# ແຈ້ງການ

**ເຖິງ:** ຕະຫຼາດຫຼັກຊັບລາວ, ບັນດາ ສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.

**ເລື່ອງ:** ນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດ ສໍາລັບຂະແໜງຕະຫຼາດທຶນ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການເປີດເຜີຍຂໍ້ມູນ ສະບັບເລກທີ 014/ຄລຕ, ລົງວັນທີ 19 ພຶດສະພາ 2011;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ) ສະບັບເລກທີ 05/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມ ມະຕິວ່າດ້ວຍການຮັບມືກັບການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກໂຄໂຣນາສາຍພັນໃໝ່ (COVID-19) ສະບັບເລກທີ 03/ລບ, ລົງວັນທີ 23 ມີນາ 2020.

ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຂໍແຈ້ງມາຍັງ ຕະຫຼາດຫຼັກຊັບລາວ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຊາບວ່າ: ໃນໄລຍະການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (**COVID-19**) ໄດ້ສ້າງຜົນກະທົບເປັນວົງກວ້າງ ຕໍ່ລະບົບເສດຖະກິດ ແລະ ສັງຄົມ ຊຶ່ງລັດຖະບານ ກໍ່ໄດ້ມີການກຳນົດນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດຕ່າງໆ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດດັ່ງກ່າວ ແນໃສ່ເຮັດໃຫ້ບັນຍາກາດຂອງການດຳເນີນທຸລະກິດ ໃຫ້ສາມາດສືບຕໍ່ເຄື່ອນໄຫວວຽກງານໃນຊ່ວງວິກິດນີ້ໄດ້ ທັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ.

ດັ່ງນັ້ນ, ຄຄຊ ຈຶ່ງຂໍແຈ້ງມາຍັງທຸກພາກສ່ວນຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດມະຕິຄຳສັ່ງຂອງລັດຖະບານ ຢ່າງເຄັ່ງຄັດ ເປັນຕົ້ນແມ່ນ ການຈັດສັນພະນັກງານມາເຮັດວຽກຕາມຄວາມເໝາະ



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານເພຍວັດ, ໜ່ວຍ 6, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-21 7806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

ສິນເພື່ອບໍ່ໃຫ້ແອອັດ, ການປະຊຸມຊ່ອງທາງເອເລັກໂຕຼນິກ (ໂທລະສັບ ຫຼື ວີດີໂອ) ແລະ ຫຼີກລ້ຽງການໄປສະຖານທີ່ຊຸມນຸມ ເປັນຕົ້ນ. ພ້ອມດຽວກັນນັ້ນ, ຄຄຊ ໄດ້ມີນະໂຍບາຍ ແລະ ມາດຕະການ ສຳລັບຂະແໜງຕະຫຼາດທຶນ ແລະ ການຍົກເວັ້ນບາງເນື້ອໃນທີ່ໄດ້ກຳນົດໃນລະບຽບການກ່ຽວກັບວຽກງານຫຼັກຊັບ ໃນໄລຍະການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ດັ່ງລາຍລະອຽດລຸ່ມນີ້:

**I. ສຳລັບ ຕະຫຼາດຫຼັກຊັບລາວ (ຕລຊລ)**

1. ໃຫ້ຄະນະອຳນວຍການ ຂອງ ຕລຊລ ອອກຖະແຫຼງຂ່າວຜ່ານສື່ຕ່າງໆ ເພື່ອສ້າງຄວາມເຊື່ອໝັ້ນແກ່ຜູ້ລົງທຶນຕໍ່ສະພາບການຊື້-ຂາຍຫຼັກຊັບ ແລະ ລະບົບຊຳລະສະສາງຂອງ ຕລຊລ ແລະ ການເປີດບໍລິການຕາມປົກກະຕິຂອງຕົນ;
2. ໃຫ້ ຕລຊລ ເອົາໃຈໃສ່ຕິດຕາມສະພາບການຊື້-ຂາຍຢ່າງໃກ້ຊິດ ຕໍ່ພຶດຕິກຳຂອງຜູ້ລົງທຶນ ເພື່ອໃຫ້ຜູ້ລົງທຶນມີຄວາມເຊື່ອໝັ້ນໃນການລົງທຶນໃນ ຕລຊລ ຫຼາຍຍິ່ງຂຶ້ນ ພ້ອມທັງເປັນການປ້ອງກັນການສວຍໃຊ້ໂອກາດໃນສະພາບການວິກິດນີ້ເພື່ອຊື້-ຂາຍຮຸ້ນທີ່ບໍ່ຍຸຕິທຳ ຫຼື ມີການຕັດສິນໃຈເທຂາຍຮຸ້ນອອກຈຳນວນຫຼາຍຂອງຜູ້ລົງທຶນ;
3. ໃຫ້ສືບຕໍ່ໂຄສະນາໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ກ່ຽວກັບການຊື້-ຂາຍຫຼັກຊັບຜ່ານ (Home Trading System);
4. ໃຫ້ ຕລຊລ ສົມທົບກັບ ບໍລິສັດຫຼັກຊັບ ສ້າງແຜນຄວບຄຸມຄວາມສ່ຽງຂອງຕົນ (Contingency Plan) ທີ່ຕິດພັນກັບການໃຫ້ບໍລິການຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ ສາມາດດຳເນີນທຸລະກຳຊື້-ຂາຍ ແລະ ຊຳລະສະສາງ ໄດ້ເປັນປົກກະຕິ ເພື່ອຮັບມືກັບສະພາບການໃນໄລຍະການລະບາດຂອງພະຍາດດັ່ງກ່າວ ທັງນີ້ເພື່ອໃຫ້ແຜນການຄວບຄຸມຄວາມສ່ຽງມີປະສິດທິພາບ ແລະ ຄວາມສອດຄ່ອງກັບສະພາບເງື່ອນໄຂຕົວຈິງຕົນ;
5. ພ້ອມນີ້ ຕ້ອງໄດ້ເອົາໃຈໃສ່ປະຕິບັດມາດຕະການປ້ອງກັນຕ່າງໆ ທີ່ພາກສ່ວນທີ່ກ່ຽວຂ້ອງ ໄດ້ກຳນົດໃນແຕ່ລະໄລຍະຢ່າງເຂັ້ມງວດ.

**II. ສຳລັບ ສະຖາບັນສື່ກາງດ້ານຫຼັກຊັບ**

1. **ບໍລິສັດຫຼັກຊັບ:**

- ຍົກເວັ້ນການປະຕິບັດ ມາດຕາ 13 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ, ສະບັບເລກທີ 002/ຄຄຊ ລົງວັນທີ 24 ກໍລະກົດ 2013 ໂດຍການຜ່ອນຜັນເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2019 ທີ່ຕ້ອງຊຳລະພາຍໃນ ໄຕມາດໜຶ່ງ ຂອງປີຖັດໄປ ມາເປັນໄຕມາດສອງ;
- ຍົກເວັ້ນ ການປະຕິບັດ ມາດຕາ 09 ຂໍ້ 2, 3 ແລະ ຂໍ້ 4 ຂອງລະບຽບວ່າດ້ວຍການລາຍງານ, ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012 ໂດຍການເລື່ອນການປະຕິບັດພັນທະການລາຍງານ ຂອງບໍລິສັດຫຼັກຊັບ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານ ແລະ ເປີດເຜີຍແບບປົກກະຕິ ເປັນຕົ້ນໄປ.

2. **ບໍລິສັດກວດສອບ:**

- ຍົກເວັ້ນການປະຕິບັດ ມາດຕາ 22 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການບັນຊີ ແລະ ການກວດສອບກ່ຽວກັບວຽກງານຫຼັກຊັບ, ສະບັບເລກທີ 12/ຄຄຊ ລົງວັນທີ 29 ພຶດສະພາ 2017 ໂດຍຜ່ອນຜັນເລື່ອນເວລາການ

ຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2019 ທີ່ຕ້ອງຊຳລະ ພາຍໃນເດືອນ ມັງກອນ 2020 ມາເປັນ ເດືອນ ມິຖຸນາ 2020;

- ຍົກເວັ້ນການປະຕິບັດ ມາດຕາ 13 ຂອງລະບຽບວ່າດ້ວຍການລາຍງານ, ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012 ໂດຍເລື່ອນການປະຕິບັດພັນທະການລາຍງານ ຂອງບໍລິສັດກວດສອບ ອອກໄປ 45 ວັນ ລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານ ແລະ ເປີດເຜີຍແບບປົກກະຕິ ເປັນຕົ້ນໄປ;

3. **ບໍລິສັດ ປະເມີນມູນຄ່າຊັບສິນ:**

- ຍົກເວັ້ນການປະຕິບັດ ມາດຕາ 16 ຂໍ້ 3 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ, ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015 ໂດຍຜ່ອນຜັນເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2019 ທີ່ ຕ້ອງຊຳລະພາຍໃນ ໄຕມາດໜຶ່ງ ຂອງປີ 2020 ມາເປັນ ໄຕມາດສອງ ຂອງປີ 2020;
- ຍົກເວັ້ນການປະຕິບັດມາດຕາ 15 ຂໍ້ 1 ແລະ ຂໍ້ 2 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ, ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015 ໂດຍເລື່ອນການປະຕິບັດພັນທະການລາຍງານ ປະຈຳໄຕມາດ ແລະ ປະຈຳປີ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານ ແລະ ເປີດເຜີຍແບບປົກກະຕິ ເປັນຕົ້ນໄປ;

4. **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື:**

- ຍົກເວັ້ນການປະຕິບັດ ມາດຕາ 13 ຂໍ້ 3 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ, ສະບັບເລກທີ 002/ຄຄຊ, ລົງວັນທີ 08 ທັນວາ 2015 ໂດຍຜ່ອນຜັນເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2019 ທີ່ຕ້ອງຊຳລະພາຍໃນ ໄຕມາດໜຶ່ງ ຂອງປີ 2020 ມາເປັນໄຕມາດສອງ ຂອງປີ 2020;
- ຍົກເວັ້ນການປະຕິບັດ ມາດຕາ 12 ຂໍ້ 1 ແລະ ຂໍ້ 2 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ, ສະບັບເລກທີ 002/ຄຄຊ, ລົງວັນທີ 08 ທັນວາ 2015 ໂດຍເລື່ອນການປະຕິບັດພັນທະການລາຍງານ ປະຈຳໄຕມາດ ແລະ ປະຈຳປີ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານ ແລະ ເປີດເຜີຍແບບປົກກະຕິ ເປັນຕົ້ນໄປ;

5. **ທະນາຄານດູແລຊັບສິນ:** ຍົກເວັ້ນການປະຕິບັດ ມາດຕາ 11 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງການເຄື່ອນໄຫວທະນາຄານດູແລຊັບສິນ, ສະບັບເລກ ທີ 016/ຄຄຊ, ລົງວັນທີ 28 ມິຖຸນາ 2019 ໂດຍຜ່ອນຜັນເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2019 ທີ່ ຕ້ອງຊຳລະພາຍໃນ ໄຕມາດໜຶ່ງ ຂອງປີ 2020 ມາເປັນ ໄຕມາດສອງ ຂອງປີ 2020;
6. ສະຖາບັນສີກາງດ້ານຫຼັກຊັບ ຕ້ອງມີແຜນຮອງຮັບການດຳເນີນທຸລະກິດໃຫ້ມີຄວາມຕໍ່ເນື່ອງ ເພື່ອຮັກສາໜ້າວຽກຫຼັກໃຫ້ສາມາດດຳເນີນງານໄປໄດ້ຢ່າງຕໍ່ເນື່ອງ ແລະ ຈັດໃຫ້ມີສູນແຈ້ງ ສາຍດ່ວນ ໃນກໍລະນີສຸກເສີນຕ່າງໆ ໃຫ້ກັບລູກຄ້າ ແລະ ພະນັກງານຂອງຕົນ;
7. ການສົ່ງຄຳສັ່ງຊື້-ຂາຍຫຼັກຊັບ ຕ້ອງສົ່ງຜ່ານທາງໂທລະສັບ, ແຟັກ ຫຼື ລະບົບຊື້-ຂາຍແບບ Home Trading System;

8. ສະຖາບັນສື່ກາງດ້ານຫຼັກຊັບ ຕ້ອງປະສານງານພະນັກງານທີ່ກ່ຽວຂ້ອງຂອງ ສຄຄຊ ຢ່າງໃກ້ຊິດ ກໍລະນີມີເຫດສຸກເສີນຕ່າງໆເກີດຂຶ້ນທີ່ຮ້າຍແຮງຕໍ່ການດຳເນີນ ແລະ ການບໍລິການລູກຄ້າຂອງຕົນ ຫຼື ຕໍ່ວຽກງານຫຼັກຊັບໂດຍລວມ;
9. ພ້ອມນີ້ ຕ້ອງໄດ້ເອົາໃຈໃສ່ປະຕິບັດມາດຕະການປ້ອງກັນຕ່າງໆ ທີ່ພາກສ່ວນທີ່ກ່ຽວຂ້ອງ ໄດ້ກຳນົດໃນແຕ່ລະໄລຍະຢ່າງເຂັ້ມງວດ.

**III. ສຳລັບ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ**

1. ຍົກເວັ້ນການປະຕິບັດ ມາດຕາ 43 ຂໍ້ 5 ຂອງຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ), ສະບັບເລກທີ 05/ຄຄຊ ລົງວັນທີ 28 ມັງກອນ 2019 ໂດຍຍົກເວັ້ນຄ່າທຳນຽມຄຸ້ມຄອງປະຈຳປີ ຈຳນວນ 10 ລ້ານກີບ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ຍົກເວັ້ນໃຫ້ 1 ປີ ສຳລັບປີ 2020, ກໍລະນີບໍລິສັດໃດ ຫາກໄດ້ຈ່າຍຄ່າຄຸ້ມຄອງປະຈຳປີ 2020 ແລ້ວ ແມ່ນຍົກເວັ້ນໃນປີ 2021) ເພື່ອຊຸກຍູ້ ແລະ ຫຼຸດຜ່ອນ ຄ່າໃຊ້ຈ່າຍຂອງບໍລິສັດຈົດທະບຽນທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ;
2. ຍົກເວັ້ນການປະຕິບັດ ມາດຕາ 8 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ (ສະບັບປັບປຸງ), ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019 ໂດຍຂະຫຍາຍກຳນົດເວລາການລາຍງານ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ 2019 ແລະ ເອກະສານລາຍງານການເງິນປີ 2019 ຂອງບໍລິສັດຈົດທະບຽນທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ ຈາກເດີມ ພາຍໃນ 120 ວັນ ມາເປັນ 150 ວັນ ພາຍຫຼັງສິ້ນສຸດປີການບັນຊີເປັນຕົ້ນໄປ ຫຼື ຕາມກຳນົດເວລາອື່ນທີ່ເໝາະ ສົມ ໂດຍອີງໃສ່ສະພາບການລະບາດ ຂອງພະຍາດ COVID-19 ຢູ່ ສປປ ລາວ;
3. ໃຫ້ບັນດາບໍລິສັດຈົດທະບຽນ ເອົາໃຈໃສ່ປະຕິບັດມາດຕະການປ້ອງກັນຕ່າງໆ ທີ່ພາກສ່ວນທີ່ກ່ຽວຂ້ອງ ໄດ້ກຳນົດໃນແຕ່ລະໄລຍະຢ່າງເຂັ້ມງວດ ພ້ອມທັງ ເປີດເຜີຍຂໍ້ມູນກ່ຽວກັບການດຳເນີນມາດຕະການປ້ອງກັນຂອງຕົນ ໃຫ້ຜູ້ລົງທຶນຮັບຊາບ ເພື່ອໃຫ້ສາມາດສືບຕໍ່ດຳເນີນທຸລະກິດ ໃນໄລຍະວິກິດໃນປະຈຸບັນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ;
4. ພ້ອມນີ້ ຕ້ອງໄດ້ເອົາໃຈໃສ່ປະຕິບັດມາດຕະການປ້ອງກັນຕ່າງໆ ທີ່ພາກສ່ວນທີ່ກ່ຽວຂ້ອງ ໄດ້ກຳນົດໃນແຕ່ລະໄລຍະຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມດີ ດວງດີ